ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສປງ ສືບຕໍ່ເຜີຍແຜ່ດຳລັດວ່າດ້ວຍການປົກປ້ອງເງິນຝາກ

ສຳນັກງານປົກປ້ອງເງິນຝາກ (ສປງ) ສືບຕໍ່ເຜີຍແຜ່ດຳລັດວ່າດ້ວຍການປົກປ້ອງເງິນຝາກ ຢ່າງຕໍ່ເນື່ອງ ລ່າສຸດໄດ້ສຳເລັດການລົງເຜີຍແຜ່ໃຫ້ແກ່ບັນດາຄູ-ອາຈານ ແລະ ນັກສຶກສາ (ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ປະລິນຍາຕີ) ຢູ່ທີ່ມະຫາວິທະຍາໄລແຫ່ງຊາດມີຜູ້ສົນໃຈເຂົ້າຮ່ວມຫລາຍກວ່າ 200 ຄົນ. ໃຫ້ກຽດເຂົ້າຮ່ວມພິທີຄັ້ງນີ້ມີທ່ານ ນ. ແສງດາວວີ ວົງຄຳຊາວ ຫົວໜ້າສຳນັກງານປົກປ້ອງເງິນຝາກ ແລະ ທ່ານ ປທ. ເພັດສະໝອນ ພົມມະວົງ ວ່າການຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.




ຈຸດປະສົງຂອງການເຜີຍແຜ່ດຳລັດຄັ້ງນີ້ແມ່ນເພື່ອໃຫ້ສັງຄົມຮັບຊາບກັນຢ່າງກວ້າງຂວາງກ່ຽວກັບວຽກງານປົກປ້ອງເງິນຝາກຂອງ ສປປ ລາວ ໃນຂອບເຂດທົ່ວປະເທດ ທັງນີ້ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບວຽກງານປົກປ້ອງເງິນຝາກ ກໍ່ຄື ສຳນັກງານປົກປ້ອງເງິນຝາກ ໃນການເຮັດໜ້າທີ່ປົກປ້ອງສິດຜົນປະໂຫຍດຂອງຜູ້ຝາກເງິນ ໃນເວລາທີ່ສະຖາບັນການເງິນໃດໜຶ່ງທີ່ເປັນສະມາຊິກຫາກຕົກໃນສະພາວະລົ້ມລະລາຍ, ສຳນັກງານປົກປ້ອງເງິນຝາກ ຈະຈ່າຍຄືນເງິນຝາກໃຫ້ແກ່ຜູ້ຝາກເງິນທີ່ຝາກເງິນໄວ້ນຳສະມາຊິກຂອງ ສຳນັກງສານປົກປ້ອງເງິນຝາກ ໃນວົງເງິນປົກປ້ອງທີ່ກຳນົດໄວ້ຕາມລະບຽບການ. ພ້ອມນີ້ ແນໃສ່ສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມໃນການຊົມໃຊ້ການບໍລິການເງິນຝາກຢູ່ນຳສະຖາບັນການເງິນໃຫ້ຫລາຍຂຶ້ນ.




ສໍາລັບເນື້ອໃນການເຜີຍແຜ່ດໍາລັດວ່າດ້ວຍການປົກປ້ອງເງິນຝາກໃນຄັ້ງນີ້ ທ່ານ ນ.ດາວມະນີວອນ ວິໄລວຽງ ຮອງຫົວໜ້າສໍານັກງານປົກປ້ອງເງິນຝາກ ໄດ້ນໍາສະເໜີພາບລວມ ແລະເນື້ອໃນຄວາມສໍາຄັນຂອງດໍາລັດດັ່ງກ່າວ ລວມທັງໝົດມີ 10 ໝວດ, 55 ມາດຕາໃນນັ້ນທ່ານໄດ້ອະທິບາຍ ແລະ ເນັ້ນໜັກຕື່ມໃນບາງມາດຕາຂອງຈໍານວນ 55 ມາດຕາ ຂອງດໍາລັດວ່າດັ່ງກ່າວ ເຊິ່ງຕິດພັນກັບສິດຜົນປະໂຫຍດໂດຍກົງຂອງຜູ້ຝາກເງິນ ໂດຍສະເພາະ ພາລະບົດບາດຂອງສໍານັກງານປົກປ້ອງເງິນຝາກ, ການປົກປ້ອງເງິນຝາກ, ວົງເງິນປົກປ້ອງ, ເງິນຝາກທີ່ໄດ້ຮັບການປົກປ້ອງ ແລະ ບໍ່ໄດ້ຮັບການປົກປ້ອງ, ຂັ້ນຕອນການຈ່າຍເງິນປົກປ້ອງ, ສິດ ແລະ ພັນທະຂອງຜູ້ຝາກເງິນ. ການເຜີຍແຜ່ຄັ້ງນີ້ ໄດ້ຮັບການຕອບຮັບທີ່ດີຈາກຄູ-ອາຈານ ແລະ ນັກສຶກສາ ໂດຍສະເພາະການໃຫ້ຄວາມສົນໃຈຮັບຟັງ ແລະ ຕັ້ງຄໍາຖາມທີ່ຫລາກຫລາຍ ເຊິ່ງເປັນປະໂຫຍດຫລາຍຕໍ່ກັບການພັດທະນາວຽກງານປົກປ້ອງເງິນຝາກ ໂດຍສະເພາະການຍົກຈາກດໍາລັດມາເປັນກົດໝາຍໃນອານາຄົດຕໍ່ໜ້າ.







**# ຂ່າວ-ພາບ ໂດຍ: ສໍານັກງານປົກປ້ອງເງິນຝາກ.**

# ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ